**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ: 3768 /ຟຟລ.ຫຟຟລ.
ນະຄອນຫຼວງວຽງຈັນ, ວັນທີ: 10 SEP 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນປີ 2027 ເພື່ອເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຮ່ວມການປະມູນ ກ່ຽວກັບການຈັດຊື້ ຊຸດກຳມະກອນ ແລະ ໝວກແກັບ ຂອງພະນັກງານ ຟຟລ ປະຈຳປີ 2027; ໄລຍະການສະໜອງທັງໝົດແມ່ນ 150 ວັນ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017 ແລະ ເອກະສານ ຄຳແນະນຳການໃຊ້ກົດ ໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ວິທີການປະມູນ ນຳໃຊ້ການປະເມີນເປີດກວ້າງ ແບບຂັ້ນຕອນດຽວ 2 ຊອງ ເນື່ອງຈາກເປັນການຈັດຊື້ສິນຄ້າປະເພດ (ຊຸດກຳມະກອນ) ທີ່ມີຄວາມຕ້ອງການຄວາມລະອຽດທາງດ້ານເຕັກນິກ ແລະ ຮູບແບບທີ່ຖືກຕ້ອງ ເພື່ອໃຫ້ຊຸດກຳມະກອນໄດ້ມາດຕະຖານທາງດ້ານຮູບແບບ ແລະ ສີ ຕາມທີ່ກຳນົດ, ການປະມູນໃຫ້ດຳເນີນການປະມູນເປີດກວ້າງແບບຂັ້ນຕອນດຽວ 2 ຊອງ ຕາມກົດໝາຍຄື:

   ຂັ້ນຕອນທີ 1: ເປີດກວ້າງໃຫ້ທຸກບໍລິສັດຜູ້ປະມູນທີ່ສົນໃຈຍື່ນເອກະສານສະເໜີທາງດ້ານມາດຖານເຕັກນິກ,ຮູບແບບ ແລະ ເງື່ອນໄຂ ເພື່ອໃຫ້ຄະນະຮັບຜິດຊອບປະເມີນຮັບຮອງເອົາມາດຖານເຕັກນິກທີ່ເໝາະສົມກ່ອນເພື່ອເປັນມາດຕະຖານອ້າງອີງ ເຊິ່ງຄະນະຮັບຜິດຊອບຈະໄດ້ກຳນົດມາດຕະຖານເຕັກນິກ ແລະ ເງື່ອນໄຂສຳລັບການປະມູນ ດ້ວຍການກຳນົດ ຮູບແບບ, ໂລໂກ້, ເນື້ອຜ້າ ແລະ ເງື່ອນໄຂອື່ນໆຕາມທີ່ລະບຸໄວ້ໃນປຶ້ມປະມູນ.

   ຂັ້ນຕອນທີ 2: ຄະນະຮັບຜິດຊອບຈະໄດ້ແຈ້ງເຊີນເອົາບໍລິສັດຜູ້ປະມູນທີ່ຜ່ານການຄັດເລືອກທາງດ້ານມາດຕະຖານເງື່ອນໄຂເຕັກນິກ ເພື່ອມາເປີດຊອງປະມູນທາງດ້ານລາຄາ.
4. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດ ແລະ ໃບມອບພັນທະອາກອນປີ 2024-2025 ທີ່ຖືກຕ້ອງຕາມກົດໝາຍ.
5. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈ ສາມາດເຮັດໜັງສືສະເໜີ ເພື່ອຊື້ຊອງປະມູນ ແລະ ຮັບເອກະສານປະມູນໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316133-1117, ພະແນກຈັດຊື້-ຈັດຈ້າງ ໃນໂມງລັດຖະການ, ເລີ່ມແຕ່ວັນທີ: 15./09/2026 ໄປຈົນເຖິງ 20/10/2026 ໃນລາຄາ 2,000,000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
6. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ:20./10/2026 ທີ່ຫ້ອງປະຊຸມຊັ້ນ 08 ຫ້ອງ 802 ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າກວ່າເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:30 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຟຟລ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.
7. ຜູ້ປະມູນຕ້ອງໄດ້ສະໜອງຫນັງສືຄ້ຳປະກັນຊອງປະມູນໃນມູນຄ່າ 2% ຂອງລາຄາທີ່ສະເໜີຮ່ວມການປະມູນ (ເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ເປັນແຊັກວີຊ່າ ເທົ່ານັ້ນທີ່ນຳໃຊ້ຈົນເຖິງວັນທີ20/02/2027).

**ຜູ້ອຳນວຍການໃຫຍ່**

ELECTRICITE DU LAOS

**ບຸນທັນ ພັນໂດລັກ**
**ຮອງຜູ້ອຳນວຍການ**

ຖະໜົນມິດຕະພາບລາວ-ໄທ,ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ ສ ປ ປ ລາວ.
ໂທ: (856-21) 316094-1614, ແຟັກ: (856-21) 316118; 263794; ອີເມວ: edlmdo@edl.com.la; ເວັບໄຊ: www.edl.com.la